ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 44 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 25 NOV 2014

ສຳນັກງານ ຄຄຊ

ຮັບ ເລກທີ: 1428

ວັນທີ: 26.11.14

ໂທລະສັບ 021 217770

**ລາຍງານການເຄື່ອນໄຫວປະຈຳອາທິດ**

**10-14/11/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: (1) ຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນ ຈຳນວນຜູ້ຂໍສະຫວັດດີການຫວ່າງງານປະຈຳອາທິດ 01/11/2014 ຫຼຸດລົງ ຈາກ 288.000 ຄົນ ເປັນ 278.000 ຄົນ; (2) ຕົວເລກທາງດ້ານເສດຖະກິດຂອງຂົງເຂດເອີຣົບອອກມາບໍ່ດີ ເປັນຕົ້ນແມ່ນຍອດຂາຍຍ່ອຍຂອງເອີຣົບ ຫຼຸດລົງຈາກ 1,9% ໃນເດືອນ 8/2014 ເປັນ 0,6% ໃນເດືອນ 9/2014.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 29/10-04/11/2014 | ອາທິດນີ້ 05-11/11/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,2511 | 1,2421 | 0,72% |
| ໂດລາ/ເຢນ | 113,53 | 115,27 | -1,51% |
| ໂດລາ/ບາດ | 32,66 | 32,82 | -0,48% |
| ໂດລາ/ເປໂຊ | 44,94 | 44,91 | 0,06% |
| ໂດລາ/ຣູເປັຍ | 12110,67 | 12176,00 | -0,54% |
| ໂດລາ/ໂດລາສິງກະໂປ | 1,2890 | 1,2922 | -0,25% |
| ໂດລາ/ຢວນ | 6,1163 | 6,1209 | -0,08% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 1,08% ຈາກ 77,98 ໂດລາ/ບາເຣວ ມາເປັນ 77,14 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເປັນຕົ້ນແມ່ນ ສ.ສະຫະລັດ ຄັງສຳຮອງນ້ຳມັນດິບປະຈຳອາທິດ 24/10/2014 ເພີ່ມຂຶ້ນ 2,1 ລ້ານບາເຣວ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາໃນຕະຫຼາດສາກົນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,20% ຈາກ 1.166,30 ໂດລາ/ອອນ ມາເປັນ 1.152,33 ໂດລາ/ອອນ ຍ້ອນນັກລົງທຶນສືບຕໍ່ເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ, ໂດຍສະເພາະກອງທຶນຖືຄອງຄຳ (SPDR) ຫຼຸດຜ່ອນການຖືຄອງຄຳລົງ 2,99 ໂຕນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,07% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,12% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,33% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,39% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 29/10-04/11/2014 | | | ອາທິດນີ້ 04-11/11/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.035,53 | 8.067,53 | 8.051,78 | 8.041,78 | 8.073,61 | 8.057,37 | -0,08% | -0,08% | -0,07% |
| ບາດ | 248,51 | 249,76 | 249,36 | 247,81 | 248,96 | 248,54 | 0,28% | 0,32% | 0,33% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.041,60 | 8.071,00 | 8.056,30 | 8.051,58 | 8.080,67 | 8.066,13 | -0,12% | -0,12% | -0,12% |
| ບາດ | 248,86 | 250,75 | 249,80 | 247,99 | 249,70 | 248,85 | 0,35% | 0,42% | 0,39% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,08% | 0,04% | 0,06% | 0,12% | 0,09% | 0,11% | | | |
| ບາດ | 0,14% | 0,40% | 0,18% | 0,07% | 0,30% | 0,12% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,12% ທຽບໃສ່ວັນທີ 07/11/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 70,75%.
- ປະລິມານເງິນ $M_2$ ຫຼຸດລົງ 0,26% ເມື່ອທຽບໃສ່ວັນທີ 07/11/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,22%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (ວັນທີ 04-11/11/2014) ເຫັນວ່າ ທຫກ ຂາຍໂດລາສຸດທິ 1,08 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 44,22 ລ້ານໂດລາ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ແລະ ຂາຍໂດລາໄດ້ 45,29 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 101,53 ລ້ານບາດ (ໃນນີ້ ຊື້ບາດໄດ້ 324,48 ລ້ານບາດ ແລະ ຂາຍບາດໄດ້ 426 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 38,98% ແລະ ຫຼຸດລົງ 32,93% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍ ເງິນໂດລາມີ ຈໍານວນ 9,92 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 158,14 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 9,57 ລ້ານໂດລາ ແລະ ຂາຍບາດສຸດທິ ຈໍານວນ 123 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 20,47 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈໍານວນ 647,83 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 28/10-03/11/2014 | | ອາທິດນີ້ 04-11/11/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 18,77 | 159,33 | 16,65 | 155,92 | -11,33% | -2,14% |
| - ທ/ຄທຸລະກິດອື່ນໆ | 27,15 | 262,68 | 27,57 | 168,56 | 1,55% | -35,83% |
| ລວມຊື້: | 45,92 | 422,00 | 44,22 | 324,48 | -3,71% | -23,11% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 17,21 | 228,52 | 17,72 | 257,44 | 2,99% | 12,65% |
| - ທ/ຄທຸລະກິດອື່ນໆ | 83,55 | 468,43 | 27,57 | 168,56 | -67,00% | -64,02% |
| ລວມຂາຍ: | 100,76 | 696,96 | 45,29 | 426,00 | -55,05% | -38,88% |
| ຊື້-ຂາຍສຸດທິ ທທກ | -54,83 | -274,95 | -1,08 | -101,53 | -98,04% | -63,08% |
| ຜິດດ່ຽງ ຊື້-ຂາຍ | -119,41 | -65,15 | -2,44 | -31,29 | 116,57% | 338,55% |
| ມູນຄ່າການຊື້-ຂາຍ | 146,68 | 1.118,96 | 89,51 | 750,48 | -38,98% | -32,93% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 7,05 | 226,50 | 9,57 | 123,00 | | |
| ຊື້-ຂາຍສຸດທິ ທຫລ | -7,05 | -226,50 | -9,57 | -123,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 39,15 | 66,19 | 9,92 | 158,14 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,20 | 89,81 | 0,58 | 648,35 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 2,89 | 0,00 | 21,05 | 0,52 | | |
| ຊື້-ຂາຍສຸດທິ ທຫລ | -2,69 | 89,81 | -20,47 | 647,83 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 11/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 3,01% ຫຼຸດລົງ 0,02% ຈາກ 3,03% ໃນເດືອນ 10/2014.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 50,41 ລ້ານໂດລະ ຫະລັດທຽບເທົ່າ, ຫຼຸດລົງ 5% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 680 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 3,03% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 298,82 ຕື້ກີບ ຫຼຸດລົງ 50,35% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (07-13/11/2014) ມີຈຳນວນ 947 ຄັ້ງ ໂດຍມີມູນຄ່າ 165,4 ຕື້ກີບ ຫຼຸດລົງ 2,9% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 327 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.433,52 ຈຸດ ເພີ່ມຂຶ້ນ 1,43% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 142.738 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 1,03 ຕື້ກີບ ຫຼຸດລົງ 5,46% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 62,87% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.663 ກີບ ຫຼຸດລົງ 4 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 52.091 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 399,19 ລ້ານກີບ ເພີ່ມຂຶ້ນ 3,59% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 53,05% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,47%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.005 ກີບ ເພີ່ມຂຶ້ນ 15 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 90.647 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 634,99 ລ້ານກີບ ຫຼຸດລົງ 10,38% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍ ກວມເອົາ 67,09% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,24%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ຊຶ່ງໃນອາທິດນີ້ກໍບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດຈັດກອງປະຊຸມ: ❶ ກອງປະຊຸມເຜີຍແຜ່ບາງເອກະສານທີ່ຕິດພັນກັບ ການກໍ່ສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ໃຫ້ບັນດາເລຂາໜ່ວຍພັກ ແລະ ເລຂາຄະນະພັກຮາກຖານ; ❷ ກອງປະຊຸມເຜີຍແຜ່ ດຳລັດ ວ່າດ້ວຍການແຈ້ງຊັບສິນ ແລະ ລາຍຮັບໃຫ້ພະນັກງານທະນາຄານທົ່ວລະບົບຢູ່ຂັ້ນທ້ອງຖິ່ນ; ❸ ກອງປະຊຸມປຶກສາຫາລືກ່ຽວກັບການກຳນົດພາກສ່ວນກ່ຽວຂ້ອງຂອງ ສປປ ລາວ ໃນການຮັບຄຳຮ້ອງຂໍຈາກ ຄະນະກຳມະການຕ້ານການກໍ່ການຮ້າຍ ຂອງສະຫະປະຊາຊາດ (CTED) ໃນການອາຍັດຊັບສິນຂອງຜູ້ກໍ່ການຮ້າຍ; ❹ ກອງປະຊຸມປຶກສາຫາລືກ່ຽວກັບການຂໍການຊ່ວຍເຫຼືອກັບ ທະນາຄານແຫ່ງປະເທດໄທ ດ້ານການພັດທະນາບຸກຄະລາກອນ;
- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຝຶກອົບຮົມ: ກອງປະຊຸມໜ່ວຍງານພາຍໃຕ້ວຽກງານອາຊຽນ +3 "Series of ASEAN+3 Meeting" ທີ່ປະເທດ ສ. ເກົາຫຼີ ແລະ ຝຶກອົບຮົມ ໃນຫົວຂໍ້ "Global-East Government Fund Roundtable" ທີ່ປະເທດສິງກະໂປ;
- ສຳເລັດການເຮັດທົດລອງ CMIM Test Run ຮ່ວມກັບ ກະຊວງການເງິນ ທີ່ ທຫລ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີການົດ.

- ສໍາເລັດການຈັດສໍາມະນາຮ່ວມກັບຊ່ຽວຊານ IMF ໃນຫົວຂໍ້: ວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຄານທຸລະກິດ (Banking Supervision) ໃຫ້ແກ່ພະນັກງານ ທຫລ ທີ່ສະຖາບັນການທະນາຄານ;
- ສໍາເລັດການເຮັດວຽກຮ່ວມກັບຊ່ຽວຊານຫ້ອງ TA ຂອງ IMF ປະຈໍາໄທ ທີ່ໄດ້ມາພົບປະ ແລະ ເຮັດວຽກຮ່ວມກັບກົມກ່ຽວຂ້ອງຂອງ ທຫລ ເພື່ອປຶກສາຫາລືກ່ຽວກັບວຽກງານນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ;
- ສໍາເລັດການຄົ້ນຄວ້າກ່ຽວກັບການອອກແຈ້ງການຍົກເລີກການຮັບຝາກປະຈໍາ ຂອງ ທຫລ ນັບແຕ່ປີ 2015 ເປັນຕົ້ນໄປ;
- ສໍາເລັດການເຜີຍແຜ່ແຜນການດໍາເນີນງານຂອງ ສປປ ລາວ (Action Plan) ແລະ ຄໍາເຫັນຂອງຄະນະທົບທວນຂອງລະດັບພາກພື້ນ (RRG) ໃຫ້ພະນັກງານພາຍໃນ ໜຕຟງ;
- ສໍາເລັດການຕ້ອນຮັບຄະນະທູດອັງກິດ, ປະຈໍາ ສປປ ລາວ ເຂົ້າພົບປະ ແລະ ເຮັດວຽກ ກັບ ທຫລ (ໜ່ວຍງານຕ້ານການຟອກເງິນ);
- ສໍາເລັດການແຕ່ງຕັ້ງ ຄະນະຮັບຜິດຊອບ ກ່ຽວກັບກົດໝາຍວ່າດ້ວຍການເກັບພາສີລາຍໄດ້ ຄົນສັນຊາດອາເມລິກາ ທີ່ມີບັນຊີເງິນຝາກຢູ່ຕ່າງປະເທດ (FATCA) ຕາມບົດບັນທຶກຂອງກະຊວງການຕ່າງປະເທດ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າຄໍາຮ້ອງຟ້ອງຂອງລູກຄ້າ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ເອກພັດທະນາ ຕໍ່ກັບການຄິດໄລ່ອັດຕາດອກເບ້ຍເງິນກູ້ຂອງສະຖາບັນ, ປັດຈຸບັນຢູ່ໃນຂັ້ນຕອນຂໍການປະກອບຄໍາເຫັນຈາກພະແນກນິຕິກໍາ, ❷ ຄົ້ນຄວ້າກ່ຽວກັບຂັ້ນຕອນການຊໍາລະສະສາງ ແລະ ນໍາໜີ້ຂອງ ສສງ ທຸລະຄົມ, ❸ ຄົ້ນຄວ້າການສະເໜີຂອງໂຄງການ AFP ຕໍ່ການສະເໜີພິຈາລະນາເອົາຕົວແທນຈາກທະນາຄານທຸລະກິດລັດເຂົ້າຮ່ວມໃນສະພາບໍລິຫານ NSOs, ❹ ຄົ້ນຄວ້າກ່ຽວກັບການເຂົ້າເປັນຊະມະຊິກ AFI (ມູນລະນິທິ ເພື່ອການເຂົ້າເຖິງແຫຼ່ງທຶນທີ່ທົ່ວໄປ), ❺ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ໃນແຕ່ລະ Pillar ໂດຍລົງເລິກບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາ ຄານ ຕາມຫຼັກການບາແຊວ 2 ເພື່ອເປັນໝາກຜົນໃນການລາຍງານກອງປະຊຸມຄົບຄະນະບາແຊວ 2 ຄັ້ງທີ IV, ❻ ຄົ້ນຄວ້າຮ່າງບົດບັນທຶກຊ່ວຍຈໍາລະຫວ່າງໜ່ວຍງານ AMLIU ກັບກົມພາສີກະຊວງການເງິນ, ກົມຕໍາຫຼວດເສດຖະກິດ, ກະຊວງປ້ອງກັນຄວາມສະຫງົບ ແລະ ໜ່ວຍງານຕ້ານການຟອກເງິນ ປະເທດກໍາປູເຈຍ, ❼ ຄົ້ນຄວ້າແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້ານິຕິກໍາລຸ່ມກົດໝາຍ ເພື່ອນໍາສະເໜີຂັ້ນເທິງ, ❽ ຄົ້ນຄວ້າ ກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT, ❾ ຄົ້ນຄວ້າການບັນທຶກບັນຊີ ກ່ຽວກັບເຄື່ອງມືອະນຸພັນທາງການເງິນ ລົງເລິກ “Forward Rate Agreement”, ❿ ຄົ້ນຄວ້າ Option Cerrency Inte-rest Rate Swap ກ່ຽວກັບເນື້ອໃນທີ່ຕິດພັນກັບການບັນຊີຂອງອາກອນເຍື້ອນຊໍາລະ ແລະ ຄ່າເຊື່ອມພັນທະບັດ ຕາມການສະເໜີຂອງທະນາຄານການຄ້າຕ່າງປະເທດລາວ;
- ສືບຕໍ່ປະຕິບັດວຽກງານຂາຍສິດນໍາໃຊ້ທີ່ດິນ 2 ຟາກທາງຖະໜົນວຽງຈັນ 450 ປີ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ